ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຫ້ອງການ

ເລກທີ 271 /ຫກ
ນະຄອນຫຼວງວຽງຈັນ, ວັນທີ 17 ມິຖຸນາ 2024

# ແຈ້ງການ

**ຮຽນ:** ບັນດາທ່ານຫົວໜ້າກົມ, ຫົວໜ້າສະຖາບັນ, ຜູ້ອຳນວຍການ, ຫົວໜ້າບັນນາທິການ, ຫົວໜ້າກອງ, ຜູ້ອຳນວຍການວິທະຍາໄລ ພາຍໃນກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ນັບຖື

**ເລື່ອງ:** ການຂໍເຂົ້າເລກທີ, ວັນທີ, ເດືອນ, ປີ ຍ້ອນຫຼັງຂອງບັນດາກົມ, ກອງ ພາຍໃນກະຊວງ

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 1259/ຖວທ, ລົງວັນທີ 06 ທັນວາ 2023;
- ອີງຕາມ ໜັງສືລາຍງານຂອງຫ້ອງການ ກະຊວງ ຖວທ ສະບັບເລກທີ 1290/ຫກ, ລົງວັນທີ 12 ມິຖຸນາ 2024;
- ອີງຕາມ ການເຫັນດີຂອງທ່ານລັດຖະມົນຕີ ກະຊວງ ຄັ້ງວັນທີ 14 ມິຖຸນາ 2024.

ຫ້ອງການກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານ ເພື່ອຊາບ: ຕໍ່ກັບການມາຂໍເຂົ້າເລກທີ, ວັນທີ, ເດືອນ, ປີ ຍ້ອນຄືນຫຼັງ ຢູ່ຂາເຂົ້າ-ຂາອອກ ກະຊວງ ກໍຄືພະແນກຄຸ້ມຄອງເອກະສານ ແລະ ເວັບໄຊ ຫ້ອງການກະຊວງ ຜ່ານມາເຫັນໄດ້ສະພາບບັນຫາຄວາມຫຍຸ້ງຍາກສັບສົນ ໃນການຄຸ້ມຄອງເອກະສານ ເພາະການເຂົ້າເລກທີ, ວັນທີ, ເດືອນ, ປີ ຍ້ອນຄືນຫຼັງ ນັ້ນອາດຈະໄປທັບຊ້ອນກັບເລກທີ, ວັນທີ, ເດືອນ, ປີ ເກົ່າມີຢູ່ແລ້ວເພາະບໍ່ໄດ້ຈ່ອງເລກທີ, ວັນທີ, ເດືອນ, ປີ ໄວ້ລ່ວງໜ້າ ຕາມລະບຽບຫຼັກການດ້ານການເງິນແລ້ວ ເຫັນວ່າບໍ່ຖືກຕ້ອງ , ຂັດກັບລະບຽບການດ້ານການເງິນ ແລະ ຈະມີບັນຫາໃນເວລາກວດສອບມາກວດກາ ໂດຍສະເພາະບັນດາຂໍ້ຕົກລົງຕ່າງໆໂດຍ ລວມແລ້ວ ຈະຕິດພັນກັບການນຳໃຊ້ງົບປະມານໃນບ້ອງຕ່າງໆເປັນສ່ວນໃຫຍ່.

ສະນັ້ນ, ເພື່ອເປັນການຫຼີກເວັ້ນຕໍ່ກັບສະພາບບັນຫາດັ່ງກ່າວ ຫ້ອງການ ກະຊວງ ຈຶ່ງແຈ້ງມາຍັງບັນດາທ່ານໃນການຈັດຕັ້ງປະຕິບັດໃນຕໍ່ໜ້າ ດັ່ງນີ້:

1. **ສະເໜີໃຫ້ກົມ,** ກອງຕ່າງໆພະຍາຍາມປະກອບເອກະສານໃຫ້ທັນເວລາມາເຊັນເຂົ້າເລກທີ, ວັນທີ, ເດືອນ, ປີ ໃຫ້ຖືກຕ້ອງຕາມລະບຽບການ ໃນກໍລະນີຮີບດ່ວນ ຫຼື ລໍຖ້າເອກສານບໍ່ຄົບຖ້ວນແມ່ນໃຫ້ຂໍຈ່ອງເລກທີ, ວັນທີ, ເດືອນ ໄວ້ລ່ວງໜ້າ ເພື່ອໃສ່ຕາມຫຼັງ ທັງເປັນການຫຼີກເວັ້ນບໍ່ໃຫ້ເລກທີ, ວັນທີ, ເດືອນ, ປີ ໄປທັບຊ້ອນກັບໂຕເກົ່າທີ່ມີແລ້ວ;

2. ຖ້າຫາກກົມ, ກອງໃດ ຫາກມີຄວາມຈຳເປັນດ້ວຍເຫດຜົນຕ່າງໆ ໃນການໃສ່ເລກທີ, ວັນທີ, ເດືອນ, ປີ ຍ້ອນຫຼັງ ແມ່ນສະເໜີໃຫ້ກົມ, ກອງດັ່ງກ່າວເຮັດບົດລາຍງານ ເພື່ອຂໍອະນຸຍາດຈາກຄະນະນຳກະຊວງ ໂດຍຍົກໃຫ້ເຫັນເຫດຜົນ ແລະ ສະພາບຄວາມຈຳເປັນ ໃນການຂໍຍ້ອນເລກທີ, ວັນທີ, ເດືອນ, ປີ ຫາກໄດ້ຮັບການເຫັນດີຈຶ່ງສາມາດຈັດຕັ້ງປະຕິບັດໄດ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານເພື່ອຊາບ ຈຶ່ງພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

**ຫົວໜ້າຫ້ອງການ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ
ຫ້ອງການ

ບົວໄລ ພານຸວົງ